ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

0372 . . .

ເລກທີ........ ...../ກປ.05

ນະຄອນຫຼວງວຽງຈັນ, ວັນທີ 11 MAY 2005

# ຄຳສັ່ງ

## ຂອງລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍ ໃຫ້ຈັດຕັ້ງ ຜັນຂະຫຍາຍ ການໃຊ້ ເຕັກນິກນິເວດກະສິກຳ ເຂົ້າໃນ ການຜະລິດ ກະສິກຳ ແລະ ປ່າໄມ້ ໃຫ້ໄດ້ຮັບຜົນດີ.

ເຖິງ : ທົ່ວໜ້າ ກົມ, ສະຖາບັນ, ກອງສົ່ງເສີມ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ທົ່ວປະເທດ.

- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບ ເລກທີ 89/ນຍ, ລົງວັນທີ 22/6/99 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້.
- ອີງຕາມ ແຈ້ງການ ຂອງ ຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ ສະບັບ ເລກທີ 554/ຫສນຍ.ກລຂ, ລົງວັນທີ21/04/05 ວ່າດ້ວຍ ການເຫັນດີໃຫ້ເສີມ ຂະຫຍາຍນຳໃຊ້ ເຕັກນິກນິເວດກະສິກຳ ເຂົ້າໃນການຜະລິດກະສິກຳ ແລະ ປ່າໄມ້ ໃນ ສປປ ລາວ .

ການຈັດຕັ້ງ ປະຕິບັດ ວຽກງານຜະລິດ ກະສິກຳ ແລະ ປ່າໄມ້ ໃນຊ່ວງໄລຍະຜ່ານມາ ໄດ້ມີການຂະຫຍາຍຕົວ ແລະ ໄດ້ຮັບຜົນສຳເລັດ ດີພໍສົມຄວນ, ທັງນີ້ ກໍຍ້ອນວ່າ ຂະແໜງການ ກະສິກຳ ແລະ ປ່າໄມ້ ໄດ້ເອົາໃຈໃສ່ ບຸກບືນ ຄົ້ນຄວ້າ ທົດລອງ ແລະ ສາມາດ ຜະລິດແນວພັນໃໝ່ ທີ່ໃຫ້ຜົນຜະລິດສູງໄດ້ ໂດຍສະເພາະ ແມ່ນແນວພັນເຂົ້າ ປະຊາຊົນໄດ້ ເອົາໄປນຳໃຊ້ ຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ ຊຶ່ງໃນລະດູແລ້ງ ແມ່ນນຳໃຊ້ ແນວພັນໃໝ່ 100%, ສ່ວນລະດູຝົນ ກວມເອົາເນື້ອທີ່ ປະມານ 60 - 70% ຊຶ່ງໄດ້ເຮັດໃຫ້ ຜະລິດຕະພາບ ແລະ ຜົນຜະລິດເຂົ້າລວມໄດ້ເພີ່ມຂຶ້ນ, ຊ່ວຍເຮັດໃຫ້ພວກເຮົາສາມາດຜະລິດເຂົ້າກຸ້ມກິນ , ມີສ່ວນແຮໄວ້ ຈຳນວນໜຶ່ງ ແລະ ມີການຂາຍ ແລະ ສົ່ງອອກໃນລະດັບໜຶ່ງ .

ຄຽງຄູ່ກັບ ການຄົ້ນຄວ້າ ແນວພັນໃໝ່ນັ້ນ ກໍຍັງໄດ້ເອົາໃຈໃສ່ ຄົ້ນຄວ້າ ຊອກຫາເຕັກນິກໃໝ່ ເພື່ອຈຸດປະສົງແນໃສ່ ປົກປັກຮັກສາ ຊັບພະຍາກອນທຳມະຊາດ ເປັນຕົ້ນ ດິນ, ນ້ຳ ແລະ ປ່າໄມ້ ໃຫ້ສາມາດນຳໃຊ້ໄດ້ຢ່າງຍືນນານ.

ຄຽງຄູ່ໄປກັບ ການຍົກຜະລິດຕະພາບ ຂອງ ການຜະລິດ ກະສິກຳ ໃຫ້ສູງຂຶ້ນເທື່ອລະກ້າວ ການຄົ້ນຄວ້າ ແລະ ທົດລອງຫຼາຍ ຮູບແບບ ເຕັກນິກ ການຜະລິດ ກະສິກຳ ຈຶ່ງເຫັນວ່າ ເຕັກນິກນິເວດ ກະສິກຳ Semis direct sur couverture vegetale ( SCV ) ເປັນເຕັກນິກໜຶ່ງທີ່ດີ ແລະ ມີ ຄວາມອາດ ສາມາດ ນຳໃຊ້ເຂົ້າໃນການ ປັບປຸງດິນ, ເພີ່ມຜະລິດຕະພາບ ການປູກເຂົ້າ ແລະ ພືດກະສິກຳ ແລະ ຜະລິດພັນຫຍ້າ ເພື່ອລ້ຽງສັດ ແລະ ອື່ນໆ. ພ້ອມກັນນີ້ ກໍຍັງສາມາດຊ່ວຍປັບປຸງທີ່ດິນ ເພື່ອຈັດສັນອາຊີບໃນເຂດເຮັດໄຮ່, ແນ່ໃສ່ປະກອບສ່ວນ ຕໍ່ການຢຸດຕິຖາງປ່າເຮັດໄຮ່ ແລະ ການປົກປັກຮັກສາແຫຼ່ງນ້ຳ, ຫຼຸດຜ່ອນ ການເຊາະເຈື່ອນ ຂອງດິນ, ຫຼຸດຜ່ອນຕົ້ນທຶນ ໃນການຜະລິດ ແລະ ທັງຈະເປັນການຫັນ ການຜະລິດສິນຄ້າ ກະສິກຳ ໃຫ້ເປັນສິນຄ້າປອດສານພິດ ຄຽງຄູ່ ກັບການ ນຳໃຊ້ຊັບພະຍາກອນ ທຳມະຊາດແບບ ໝັ້ນຄົງຍືນນານ.

ດັ່ງນັ້ນ, ເພື່ອແນ່ໃສ່ ຈັດຕັ້ງຜັນຂະຫຍາຍ ແຈ້ງການ ຂອງ ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ໃຫ້ໄດ້ຮັບຜົນດີ ແລະ ເພື່ອຊຸກຍູ້ ສົ່ງເສີມ ການນຳໃຊ້ເຕັກນິກ ນິເວດ ກະສິກຳ ໃຫ້ໄດ້ ຢ່າງກວ້າງຂວາງ ແລະ ທົ່ວເຖິງ.

## ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ຈຶ່ງອອກຄຳສັ່ງ ດັ່ງນີ້:

1. ໃຫ້ ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ສົມທົບກັບ ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ຢ່າງໃກ້ຊິດ ແລະ ຢ່າງເປັນລະບົບເພື່ອ ຈັດຕັ້ງ ການຈັດຝຶກອົບຮົມ ແລະ ສາທິດ ໃຫ້ແກ່ ພະນັກງານ ວິຊາການ ຢູ່ ພະແນກ ກະສິກຳ ແລະ ປ່າໄມ້ ຂອງ ແຂວງ, ນະຄອນຫຼວງ ແລະ ເຂດພິເສດ. ພ້ອມດຽວກັນນັ້ນ ກໍ່ກະກຽມ ພື້ນທີ່ທົດລອງ-ສາທິດ ແລະ ຄົ້ນຄວ້າ ບັນດາທ່າແຮງ ແລະ ເງື່ອນໄຂຈຳນວນໜຶ່ງ ທີ່ຈຳເປັນ ເພື່ອຈັດຕັ້ງ ປະຕິບັດ ນຳໃຊ້ເຕັກນິກ ດັ່ງກ່າວ ເຂົ້າໃນການຜະລິດ ສົກປີ 2005 - 2006 ໃຫ້ໄດ້ຕາມແຜນການ, ໃນນີ້ ໃຫ້ເລັ່ງໃສ່ເຂດການຜະລິດ ທີ່ມີງົບປະມານແລະທຶນຮອນ ຂອງໂຄງການຕ່າງປະເທດສະໜັບສະໜູນຢູ່ແລ້ວ.
2. ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ ທົ່ວປະເທດ ຈັດຕັ້ງ ເຜີຍແຜ່ ແນວຄວາມຄິດ ແລະ ວິທີການຕົວຈິງ ຂອງການນຳໃຊ້ ເຕັກນິກນິເວດ ກະສິກຳ ໃຫ້ພະນັກງານ ສົ່ງເສີມ ຂອງ ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ເພື່ອແນ່ໃສ່ ໃຫ້ສາມາດ ຈັດຕັ້ງ ນຳພາ ຕົວຈິງ ໃນການນຳໃຊ້ເຕັກນິກ ດັ່ງກ່າວ ໃຫ້ໄດ້ຮັບຜົນດີ ແລະ ໃນບໍລິເວນກວ້າງຂວາງ, ຊຶ່ງເອກະສານ ດັ່ງກ່າວ ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ຈັດພິມຂຶ້ນແລ້ວ ໃນຄັ້ງວັນທີ 27 ເມສາ 2005 ໃນຫົວຂໍ້ " ເຕັກນິກ ນິເວດ ກະສິກຳ ເສັ້ນທາງກ້າວໄປສູ່ ການເຮັດກະສິກຳ ແບບໝັ້ນຄົງຍືນນານ " ນອກຈາກນີ້ ກໍ່ຍັງມີເອກະສານປະກອບອື່ນໆອີກ ເພື່ອເປັນບ່ອນອີງ .
3. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ແນະນຳຢ່າງລະອຽດ ໃຫ້ໜ່ວຍສົ່ງເສີມປະຈຳເມືອງ ເຜີຍແຜ່, ສາທິດ ແລະ ຈັດຕັ້ງ ທັດສະນະສຶກສາ ໃຫ້ແກ່ພະນັກງານ ວິຊາການ ແລະ ປະຊາຊົນ ຊາວກະສິກອນ ໃນບ່ອນ ທີ່ໄດ້ ເຮັດການທົດລອງ ແລະ ນຳໃຊ້ເຕັກນິກ ນິເວດກະສິກຳ ດັ່ງກ່າວ ມາແລ້ວນັ້ນ ເພື່ອໃຫ້ເຂົາເຈົ້າ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ສາມາດນຳໄປໃຊ້ ໃນການຜະລິດຕົວຈິງໄດ້.

4. ໃຫ້ ຈັດຕັ້ງ ເຜີຍແຜ່ ເອກະສານ ຜ່ານວິທີການຕ່າງໆ ດ້ານສື່ມວນຊົນຕ່າງໆ ກ່ຽວກັບ " ເຕັກນິກ ນິເວດກະສິກຳ ເສັ້ນທາງ ກ້າວໄປສູ່ ການເຮັດກະສິກຳ ແບບໝັ້ນຄົງຍືນນານ " ໃຫ້ລົງສູ່ປະຊາຊົນ ຊາວກະສິກອນ ແລະ ກຸ່ມການຜະລິດ ໃຫ້ຮັບຮູ້ກັນຢ່າງກວ້າງຂວາງ ແລະ ທົ່ວເຖິງໃນຂອບເຂດ ຄວາມຮັບຜິດຊອບ ຂອງຕົນ.

5. ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງວຽງຈັນ ແລະ ເຂດພິເສດ ທົ່ວປະເທດ ລາຍງານ ກ່ຽວກັບ ສະພາບ ແລະ ຜົນຄືບໜ້າ ຂອງ ການທົດປ່ຽນ ຮູບແບບ ແລະ ເຕັກນິກ ດັ່ງກ່າວ ໃຫ້ແກ່ ອຳນາດການປົກຄອງ ແຕ່ລະທ້ອງຖິ່ນ ທີ່ຕົນສັງກັດຢູ່ ໃຫ້ ຮັບຊາບ ແລະ ເຂົ້າໃຈເປັນຢ່າງດີ ທັງນີ້ກໍ່ ເພື່ອຂົນຂວາຍ ຍາດແຍ່ງການສະໜັບສະໜູນ ໃນການຂະຫຍາຍ ການນຳໃຊ້ເຕັກນິກກ່ຽວຂ້ອງ ໃຫ້ນັບມື້ນັບກວ້າງຂວາງ.

6. ໃຫ້ ສະຖາບັນ ແລະ ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້ ເປັນໃຈກາງ ແລະ ເປັນເຈົ້າການ ຊຸກຍູ້ສົ່ງເສີມ ການນຳໃຊ້ ເຕັກນິກ ນິເວດ ກະສິກຳ ໃຫ້ໄດ້ຮັບຜົນດີ ຢ່າງກ້ວາງຂວາງ, ໂດຍສະເພາະ ໃນໄລຍະການ ຜະລິດລະດູຝົນ ຂອງປີ 2005 ນີ້. ພ້ອມນີ້ ກໍ່ໃຫ້ ສົມທົບກັນ ເພື່ອຕິດຕາມ ແລະ ລາຍງານ ຜົນຄືບໜ້າ ຂອງ ການດຳເນີນການ ໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ຊາບເປັນແຕ່ລະໄລຍະ.

ຯ, ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້
ລັດຖະມົນຕີ

ດຣ. ຕີ ພົມມະສັກ

<u>ບ່ອນສົ່ງ:</u>

- ຫ້ອງວ່າການ ສຳນັກງານນາຍົກ ( ເພື່ອໃຊ້ຕ່າງລາຍງານ )
- ຫ້ອງວ່າການ ແຂວງ , ນະຄອນຫຼວງວຽງຈັນ , ເຂດພິເສດ ທົ່ວປະເທດ (ເພື່ອຊ່ວຍຊີ້ນຳ)
- ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ , ນະຄອນຫຼວງວຽງຈັນແລະ ເຂດພິເສດ ທົ່ວປະເທດ (ເພື່ອປະຕິບັດ )
- ກົມ, ກອງ, ສະຖາບັນ, ສູນ, ສະຖານີ ອ້ອມຂ້າງ ກະຊວງ ກະສິກຳ ແລະ ປ່າໄມ້ (ເພື່ອຈັດຕັ້ງປະຕິບັດ )
- ເກັບມ້ຽນ